ເມືອງຂອງທ່ານ. ການລົງຄະແນນສຽງຂອງທ່ານ
ເມືອງມິນນີອາໂປລິສ
ວັນທີ່ ໕ ເດືອນພຶສຈິກາ




ຜູ້ລົງຄະແນນສຽງຂອງເມືອງມິນນີອາໂປລິສ ໃນການເລືອກຕັ້ງໃນຣະດູໃບໄມ້ຫຼົ່ນນີ້ ເພື່ອຄັດເລືອກເອົາເຈົ້າເມືອງ ແລະຄະນະຂອງກັມມະການເມືອງ ຄະນະສະພາຄິດຄຳນວນການເສັຽພາສີ ແລະຄະນະສະພາສວນສາທາຣະນະ ຈະໃຊ້ການລົງຄະແນນສຽງແບບເລືອກຕາມຄວາມມັກຂອງທ່ານຕາມລຳດັບ ໝາຍຄວາມວ່າທ່ານສາມາດເລືອກ ໝາຍຕາມລຳດັບຄວາມມັກຂອງທ່ານໄດ້ພະແນກລະສາມຄົນ.

ນີ້ຄືການຈະເລືອກຕາມລຳດັບລົງໃນບັດປ່ອນບັດຂອງທ່ານ:

ເລືອກເອົາຜູ້ທີ່ທ່ານມັກທີ່ສຸດຜູ້ທີ່ນຶ່ງລົງໃສ່ໃນຊ່ອງທີ່ນຶ່ງ

ເລືອກເອົາຜູ້ທີ່ທ່ານມັກລອງລົງມາ ລົງໃສ່ໃນຊ່ອງທີ່ສອງ

ເລືອກເອົາຜູ້ທີ່ທ່ານມັກຜູ້ທີ່ສາມ ລົງໃສ່ໃນຊ່ອງທີ່ສາມ

**MAYOR** — Rank your first, second and third choice candidates in the columns below. One to be elected.

| 1 — 1st Choice<br>Select One | 2 — 2nd Choice, if any<br>Must be DIFFERENT from your 1st choice<br>Select One | 3 — 3rd Choice, if any<br>Must be DIFFERENT from your 1st and 2nd choices<br>Select One |
|---|---|---|
| ○ THEODORE WIRTH PARK<br>Parks Party | ○ THEODORE WIRTH PARK<br>Parks Party | ○ THEODORE WIRTH PARK<br>Parks Party |
| ○ MINNEHAHA PARK & FALLS<br>Parks United | ○ MINNEHAHA PARK & FALLS<br>Parks United | ○ MINNEHAHA PARK & FALLS<br>Parks United |
| ○ NORTH MISSISSIPPI PARK<br>Parks Party | ○ NORTH MISSISSIPPI PARK<br>Parks Party | ○ NORTH MISSISSIPPI PARK<br>Parks Party |
| ○ CHAIN OF LAKES<br>Parks United | ○ CHAIN OF LAKES<br>Parks United | ○ CHAIN OF LAKES<br>Parks United |
| ○ DOWNTOWN RIVERFRONT<br>Parks Party | ○ DOWNTOWN RIVERFRONT<br>Parks Party | ○ DOWNTOWN RIVERFRONT<br>Parks Party |
| ○ ______<br>Write-in, if any | ○ ______<br>Write-in, if any | ○ ______<br>Write-in, if any |

Minneapolis
*City of Lakes*

ລາຍລະອຽດເພີ່ມຕື່ມ ໃຫ້ເຂົ້າຫາ vote.minneapolismn.gov.

ວັນການເລືອກຕັ້ງຂອງເມືອງມິນນີອາໂປລິສ
ວັນທີ່ ໔ ເດືອນພືສຈິກາ ປີ໒໐໑໙

## ງນສຽງ ຕາມລຳດັບຄວາມມັກຂອງທ່ານ ຄືແນວໃດ?

ການລົງຄະແນນສຽງຕາມລຳດັບຄວາມມັກນັ້ນ ເພື່ອໃຫ້ທ່ານສາມາດເລືອກປ່ອນເອົາຜູ້ສມັກແຕ່ລະພະແນກໄດ້ ສາມຄົນ ຍ້ອນວ່າເມືອງມິນນີອາໂປລິສໃຊ້ການເລືອກແບບເປັນອັນ ບໍ່ມີການເລືອກຕັ້ງເທື່ອຕຳອິດ. ການເລືອກຕັ້ງເທື່ອຕຳອິດ ແລະການເລືອກຕັ້ງທົ່ວໄປຈະຮ່ວມກັນເປັນອັນດຽວກັນໃນວັນທີ່ ໔ ເດືອນພືສຈິກາ ປີ໒໐໑໙

## ຂ້ອຽຈະປ່ອນບັດເລືອກຕັ້ງແນວໃດ?

ແຕ່ລະພະແນກ ບັດປ່ອນບັດແຕ່ລະໃບຈະມີ ສາມຊ່ອງແນວຕັ້ງ ໝາຍລົງໃສ່ບັດປ່ອນບັດຈາກຊ້າຍຫາຂວາ ໝາຍເອົາຜູ້ທີ່ທ່ານມັກກວ່າລົງໃນຊ່ອງທຳອິດ ແລ້ວໝາຍເອົາຜູ້ທີ່ທ່ານມັກລອງລົງມາໃສ່ຊ່ອງທີ່ສອງ ແລະສາມຕາມລຳດັບ ແຕ່ລະພະແນກ ທ່ານສາມາດໝາຍເອົາໄດ້ຊ່ອງລະຄົນເທົ່ານັ້ນ.

ຖ້າທ່ານໝາຍລົງໃສ່ບັດຜິດ ຢາກໝາຍໃໝ່ ທ່ານກໍສາມາດຂໍບັດໃໝ່ຈາກກັມການໄດ້.

## ການນັບຄະແນນແນວໃດ?

ໃນຄືນຂອງການປ່ອນບັດ ຄະແນນຈາກການເລືອກຜູ້ທຳອິດຂອງຜູ້ສມັກແຕ່ລະພະແນກການຈະຖືກນັບ ຖ້າຜູ້ສມັກໄດ້ຮັບຄະແນນພຽງພໍຈະຊນະ ລາວຈະໄດ້ຮັບຄັດເລືອກ ເປັນຕົ້ນວ່າ ການແຂ່ງຂັນເອົາເຈົ້າເມືອງ ຜູ້ສມັກຈະຕ້ອງໄດ້ຄະແນນສຽງຫຼາຍກວ່າເຄິ່ງ ຈຶ່ງຈະໄດ້ຊນະໃນການເລືອກຕັ້ງ.

ຖ້າບໍ່ມີຜູ້ສມັກຄົນໃດໄດ້ຮັບຄະແນນສຽງພຽງພໍຈະຊນະ ການນັບຈະເລີ່ມເອົາຜູ້ທີ່ມີຄະແນນສຽງນ້ອຍກວ່າໝູ່ອອກ ແລ້ວຄະແນນໃນຊ່ອງສອງ ແລະຊ່ອງສາມຈຶ່ງນຳມານັບໃສ່ ຈົນກວ່າຈະມີຜູ້ສມັກຄົນໃດຄົນນຶ່ງມີສຽງພຽງພໍຈະຊນະໄດ້.

ລາຍລະອຽດເພີ່ມຕື່ມ ໃຫ້ເຂົ້າຫາ vote.minneapolismn.gov.